# ບໍລິການເບີກຈ່າຍເງິນເດືອນ (Payroll) ຜ່ານທະນາຄານກະສິກອນໄທ KBANK

| | |
|---|---|
| **ປະເພດຂອງຜະລິດຕະພັນ:** | **ບໍລິການເບີກຈ່າຍເງິນເດືອນ (Payroll)** ເປັນຜະລິດຕະພັນທາງເລືອກທີ່ສະດວກແລະສະໜອງບໍລິການ ໃນການເບີກຈ່າຍເງິນເດືອນທີ່ດີສຳລັບພະນັກງານຂອງບໍລິສັດ, ລູກຄ້ານິຕິບຸກຄົນ, ກະຊວງ ແລະ ອົງການຕ່າງໆ ທີ່ຕ້ອງຈ່າຍເງິນເດືອນໃຫ້ພະນັກງານ ມີຄວາມສະດວກ, ໝັ້ນໃຈ, ປອດໄພ ໃນການສັ່ງຈ່າຍເງິນ,ໂດຍຜ່ານລະບົບທະນາຄານ ບໍ່ເສຍເວລາຖືເງິນສົດເປັນຈຳນວນຫຼາຍ ແລະ ບໍ່ຈຳເປັນຕ້ອງເບີກ ເງິນສົດເພື່ອນຳໄປຈ່າຍເງິນເດືອນໃຫ້ແກ່ພະນັກງານ ລະບົບຈະນຳເງິນເດືອນຂອງພະນັກງານເຂົ້າບັນຊີເງິນຝາກຂອງພະນັກງານໃນທຸກໆເດືອນຕາມວັນທີທີ່ທາງບໍລິສັດກຳນົດໄວ້ກັບທະນາຄານ ການບໍລິການນີ້ມີຜົນປະໂຫຍດຕໍ່ ອົງກອນ ແລະ ພະນັກງານ. |
| **ຜົນປະໂຫຍດ:** | ✓ ທະນາຄານຈະນຳເງິນເດືອນຂອງພະນັກງານເຂົ້າບັນຊີເງິນຝາກຂອງພະນັກງານໃນທຸກໆ ເດືອນຕາມວັນທີ່ ທີ່ທາງບໍລິສັດກຳນົດໄວ້.<br>✓ ຫຼຸດຄວາມສ່ຽງຂອງບໍລິສັດໃນການຖືເງິນສົດ ແລະການຂົນສົ່ງເງິນສົດເພື່ອຈ່າຍເງິນເດືອນໃຫ້ພະນັກງານ.<br>✓ ລູກຄ້າບໍລິສັດຈະໄດ້ຮັບຄວາມສະດວກສະບາຍໃນການນຳໃຊ້ບໍລິການຈ່າຍເງິນເດືອນພະນັກງານ ແລະ ຫຼຸດຄ່າໃຊ້ຈ່າຍອົງກອນ.<br>✓ ລູກຄ້າບໍລິສັດຈະໄດ້ຮັບຄວາມສະດວກສະບາຍໃນການຫັກເງິນພຽງບັນຊີດຽວ ເພື່ອສາມາດນຳຈ່າຍເງິນເດືອນພະນັກງານໃນຫຼາຍບັນຊີຂອງທະນາຄານ KBankໄດ້.<br>✓ ພະນັກງານຈະໄດ້ຮັບເງິນຄົບຖ້ວນ ທັງຈຳນວນຄ່າແຮງງານ ຫຼື ເງິນເດືອນຕົວຈິງທີ່ບໍລິສັດ ຫຼື ອົງການຈ່າຍໃຫ້.<br>✓ ພະນັກງານມີຄວາມສະດວກ, ປອດໄພ ສາມາດນຳໃຊ້ບໍລິການຕ່າງໆ ຂອງທະນາຄານ KBank ໄດ້ຜ່ານຕູ້ KBank ATM, ແອັບ K Plus ແລະ/ຫຼື ໜ່ວຍບໍລິການຂອງທະນາຄານກະສິກອນໄທ. |
| **ຄຸນລັກສະນະ:** | ✓ ລູກຄ້າຜູ້ສັ່ງຈ່າຍເງິນເດືອນໃຫ້ແກ່ ບໍລິສັດ, ອົງກອນ ຫຼື ສະຖາບັນ ສຳລັບການຈ່າຍເງິນເດືອນເຂົ້າບັນຊີເງິນຝາກປະຢັດ, K eSavings ຫຼື ບັນຊີກະແສລາຍວັນ ຂອງພະນັກງານຂອງທ່ານໂດຍອີງຕາມລາຍຊື່ທີ່ໄດ້ມອບໃຫ້ທະນາຄານກະສິກອນໄທ (KBank) ຕາມທີ່ລະບຸໃນສັນຍາ.<br>✓ ສາມາດນຳຈ່າຍເງິນເດືອນໃຫ້ແກ່ພະນັກງານຕ່າງແຂວງພາຍໃນປະເທກດລາວ ແລະ ເປັນຜູ້ທີ່ມີບັນຊີທະນາຄານກະສິກອນໄທ(KBank) ຫຼື ບັນຊີໃນແອັບ K Plus.<br>✓ ພະນັກງານສາມາດນຳໃຊ້ບໍລິການຕ່າງໆ ຂອງທະນາຄານ KBank ໄດ້ຜ່ານຕູ້ KBank ATM ຜ່ານແອັບ K Plus ແລະ ສາຂາຂອງທະນາຄານ KBank ແມ່ນບໍ່ມີຄ່າທຳນຽມ. |
| **ຄຸນສົມບັດຜູ້ສະໝັກ:** | - ບຸກຄົນທົ່ວໄປ ທີ່ລວມທັ້ງພົນລະເມືອງລາວ ແລະ ຄົນຕ່າງດ້າວ<br>- ນິຕິບຸກຄົນ ຫຼື ບໍລິສັດ ທີ່ຈົດທະບຽນວິສາຫະກິດໃນປະເທດລາວ ລວມທັ້ງບໍລິສັດພາຍໃນປະເທດແລະ/ຫຼືຕ່າງປະເທດ |
| **ສະກຸນເງິນ:** | ທະນາຄານໃຫ້ບໍລິການເບີກຈ່າຍເງິນເດືອນເປັນສະກຸນເງິນ **ກີບ** ເທົ່ານັ້ນ. |
| **ເງື່ອນໄຂການນຳໃຊ້ບໍລິການ:** | - ລູກຄ້າຜູ້ສັ່ງຈ່າຍເງິນເດືອນຜ່ານລະບົບທະນາຄານຕ້ອງມີບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນ ຝາກປະຢັດນຳທະນາຄານກະສິກອນໄທ (KBank)<br>- ຄ່າທຳນຽມໃນການໂອນເງິນເດືອນຜ່ານລະບົບທະນາຄານກະສິກອນໄທ (KBank) ສະເພາະການໂອນລະຫວ່າງບັນຊີຂອງທະນາຄານກະສິກອນໄທ (KBank) ແມ່ນບໍ່ມີຄ່າທຳນຽມ<br>- ລູກຄ້າຜູ້ສັ່ງຈ່າຍເງິນເດືອນຕ້ອງມີເອກະສານ ແລະ file ຂໍ້ມູນລາຍຊື່ ແລະ ເລກບັນຊີຂອງພະນັກງານຜູ້ທີ່ຈະຮັບເງິນເດືອນພ້ອມດ້ວຍລາຍເຊັນຂອງຜູ້ມີສິດເຊັນອະນຸມັດການສັ່ງຈ່າຍໃນບັນຊີແລະຕາປະທັບບໍລິສັດ (ຖ້າມີ) ນຳສົ່ງໃຫ້ທະນາຄານທຸກຄັ້ງ ເພື່ອດຳເນີນການທຳທຸລະກຳຈ່າຍເງິນເດືອນຜ່ານລະບົບ (ກໍລະນີໂອນຜ່ານເຄົ້າເຕີ້ (Counter) ສາຂາຂອງທະນາຄານ) |
| **ຂໍ້ກຳນົດແລະເງື່ອນໄຂ:** | - ບໍລິການເບີກຈ່າຍເງິນເດືອນຈາກບັນຊີບໍລິສັດ ໄປຍັງ ບັນຊີພະນັກງານທີ່ເປີດກັບທະນາຄານກະສິກອນໄທ: ຜູ້ສະໝັກສາມາດໂອນເງິນຈາກບັນຊີກະແສລາຍວັນ ຫຼື ບັນຊີຝາກປະຢັດ ຂອງຜູ້ສະໝັກ ໄປຍັງ ບັນຊີຂອງພະນັກງານຫຼາຍໆຄົນ ທີ່ເປີດກັບທະນາຄານກະສິກອນໄທ ແລະ ບັນຊີດັ່ງກ່າວຍັງຢູ່ໃນຖານະໃຊ້ງານໄດ້. ຜູ້ສະໝັກຕົກລົງເຫັນດີແລະຍອມຮັບຂໍ້ຕົກລົງ ແລະ/ຫຼື ເງື່ອນໄຂ ທີ່ຈະໃຫ້ທະນາຄານຫັກເງິນຈາກບັນຊີເງິນຝາກຂອງທ່ານ ໂດຍສາມາດກຳນົດວັນທີ່ ແລະ/ຫຼື ເວລາໄດ້. |
| **ຄ່າທຳນຽມ:** | ສຳລັບອັດຕາຄ່າທຳນຽມການນຳໃຊ້ບໍລິການທະນາຄານຈະປະກາດແຈ້ງການໃນແຕ່ລະໄລຍະ. |